ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ 0043 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 09/01/2023

**ໜັງສືແຈ້ງເຊີນ**

ຮຽນ: ທ່ານຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລື່ອງ: ເຊີນເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023

- ອີງຕາມມະຕິຕົກລົງ ຂອງ ກອງປະຊຸມສະພາບໍລິຫານສະໄໝສາມັນຄັ້ງທີ 4/2022 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ວັນທີ 14 ພະຈິກ 2022.
- ອີງຕາມມະຕິໝູນວຽນເປັນເອກະພາບ ຂອງ ຄະນະສະພາບໍລິຫານ ຄັ້ງວັນທີ 15 ທັນວາ 2022.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“**ບໍລິສັດ**”) ຂໍຖືເປັນກຽດແຈ້ງໃຫ້ທ່ານຊາບວ່າ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຈະໄດ້ຈັດຂຶ້ນເປັນ 02 ລະບົບຄື: ລະບົບແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 01 ສໍານັກງານໃຫຍ່ລັດວິສາຫະກິດໄຟຟ້າລາວ ແລະ ລະບົບແບບອອນລາຍ. ແລະ ຂໍຖືເປັນກຽດຮຽນເຊີນທ່ານເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ໃນວັນທີ **30 ມັງກອນ 2023** ເວລາ **15:00** ໂມງ. ສໍາລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມແບບອອນລາຍ (ລາຍລະອຽດໃນເອກະສານຄັດຕິດທີ 5) ແລະ ສໍາລັບຜູ້ຖືຮຸ້ນທີ່ຈະເຂົ້າປະຊຸມແບບຊ້ອງໜ້າແມ່ນ (ເລີ່ມລົງທະບຽນເວລາ **13:30** ໂມງ), ທີ່ຫ້ອງປະຊຸມຊັ້ນ 1, ອາຄານສໍານັກງານໃຫຍ່ ຂອງລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ. ບໍລິສັດໄດ້ແຈ້ງວັນ, ເວລາ ແລະ ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຜ່ານເວັບໄຊທ໌ຂອງບໍລິສັດ (www.edlgen.com.la) ແລະ ລະບົບຂໍ້ມູນຂ່າວສານຂອງຕະຫຼາດຫຼັກຊັບລາວ (www.lsx.com.la).

ກໍານົດວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກໍານົດສິດຂອງຜູ້ຖືຮຸ້ນ ໃນການເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1 ປະຈໍາປີ 2023, ໃນວັນທີ **06 ມັງກອນ 2023**, ຊຶ່ງໄດ້ເປີດເຜີຍໃຫ້ບັນດາທ່ານຊາບແລ້ວ.

ຫວັງວ່າທ່ານຄົງສະຫຼະເວລາອັນມີຄ່າ ເຂົ້າຮ່ວມກອງປະຊຸມຄັ້ງນີ້ດ້ວຍ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ປະທານສະພາບໍລິຫານ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ບຸນເຫຼືອ ສິນໄຊວໍຣະວົງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ: (856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**<u>ເອກະສານຄັດຕິດ:</u>**

1. ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023.
2. ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2022.
3. ໃບມອບສັນທະ.
4. ເອກະສານ ແລະ ຫຼັກຖານທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ.
5. ຄໍາແນະນໍາຂັ້ນຕອນການເຂົ້າກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຜ່ານລະບົບອອນລາຍ ແລະ ໃຫ້ລົງທະບຽນກ່ອນວັນທີ **30 ມັງກອນ 2023**.
6. ແຜນທີ່ຂອງສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023.

**<u>ໝາຍເຫດ</u>:**

1. ເພື່ອເປັນການອໍານວຍຄວາມສະດວກໃຫ້ກັບບັນດາທ່ານຜູ້ຖືຮຸ້ນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ຂໍແຈ້ງມາຍັງບັນດາທ່ານຊາບຄື:

1.1 ຜູ້ຖືຮຸ້ນທຸກໆທ່ານ ສາມາດດາວໂຫຼດເອົາໜັງສືເຊີນປະຊຸມພ້ອມເອກະສານຄັດຕິດໃນເວັບໄຊທ໌ ຂອງບໍລິສັດ ແລະ ເວັບໄຊທ໌ ຂອງຕະຫຼາດຫຼັກຊັບລາວ ຫຼື ໄປຮັບເອົາໜັງສືເຊີນພ້ອມເອກະສານຄັດຕິດຢູ່ຕະຫຼາດຫຼັກຊັບລາວ ຊັ້ນ 4 ພະແນກຊໍາລະສະສາງ ແລະ ຮັບຝາກຫຼັກຊັບ, ບ້ານ ໂພນທັນເໜືອ, ຖະໜົນ T4, ເມືອງ ໄຊເສດຖາ, ແຂວງ ນະຄອນຫຼວງວຽງຈັນ. ໂທລະສັບ +85621 454 361-4. ເລີ່ມແຕ່ວັນທີ **10 ມັງກອນ 2023.**

1.2 ຜູ້ຖືຮຸ້ນທີ່ມີຈຸດປະສົງຈະເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍສາມາດສົ່ງຄໍາຖາມທີ່ຕິດພັນກັບວາລະກອງປະຊຸມມາກ່ອນບໍ່ໃຫ້ເກີນວັນທີ **26 ມັງກອນ 2023** ຜ່ານອີເມວ: agm-egm@edlgen.com.la ແລະ ບໍລິສັດຂໍແຈ້ງໃຫ້ຜູ້ຖືຮຸ້ນທີ່ປະຊຸມຜ່ານລະບົບອອນລາຍນັ້ນຊາບວ່າ ບໍ່ໄດ້ສິດໃຫ້ຕັ້ງຄໍາຖາມໃນເວລາທີ່ດໍາເນີນກອງປະຊຸມ.

1.3 ສະເໜີຜູ້ຖືຮຸ້ນມອບໝາຍໃຫ້ກໍາມະການອິດສະຫຼະ ຂອງບໍລິສັດ ເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງແທນ , ກະລຸນາປະກອບຂໍ້ມູນ ແລະ ລົງລາຍເຊັນໃນໃບມອບສັນທະຕາມ **<u>ເອກະສານຄັດຕິດ 3</u>** ທີ່ໄດ້ຄັດຕິດມາພ້ອມນີ້ໃຫ້ຖືກຕ້ອງຄົບຖ້ວນ ແລະ ໝາຍ (✔) ເພື່ອເລືອກເອົາກໍາມະການສະພາບໍລິຫານອິດສະຫຼະ ຂອງບໍລິສັດທ່ານໃດໜຶ່ງເປັນຜູ້ຕາງໜ້າ ແລະ ສົ່ງໃບມອບສັນທະດັ່ງກ່າວ ພ້ອມເອກະສານປະກອບມາທາງທີ່ຢູ່ອີເມລຂອງບໍລິສັດ: proxy-register@edlgen.com.la ຫຼື ໄປສະນີເຖິງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນຊັ້ນ 07, **ພະແນກເລຂານຸການບໍລິສັດ**, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ.2392. ແລະ **ກະລຸນາສົ່ງກ່ອນວັນທີ 30 ມັງກອນ 2023.**

2. ສໍາລັບຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມປະຊຸມດ້ວຍຕົນເອງກະລຸນານໍາບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຖືຮຸ້ນຄົນຕ່າງປະເທດ) ມາໃນວັນປະຊຸມ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມ.
3. ສໍາລັບຜູ້ຕາງໜ້າທີ່ຈະເຂົ້າຮ່ວມປະຊຸມຈະຕ້ອງນໍາເອກະສານ ຫຼື ຫຼັກຖານ ເພື່ອສະເໜີໂຕເຂົ້າຮ່ວມກອງປະຊຸມຕາມລາຍລະອຽດທີ່ໄດ້ລະບຸໄວ້ໃນ **<u>ເອກະສານຄັດຕິດ 4</u>** ທີ່ໄດ້ຄັດຕິດມາພ້ອມນີ້ ແລະ ສົ່ງມອບໃຫ້ປະທານໃນກອງປະຊຸມ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍຈາກປະທານ, ຜູ້ຕາງໜ້າຈຶ່ງເຂົ້າຮ່ວມກອງປະຊຸມໄດ້.
4. ຖ້າຫາກທ່ານມີຂໍ້ສົງໄສ ຫຼື ຄໍາຖາມກ່ຽວກັບການມອບສັນທະ, ທ່ານສາມາດສອບຖາມ ທ່ານ ອິນປັນ ບໍລິຫານ ໂທ: (856-20) 5559 2263 ແລະ ທ່ານ ພຸດທະສອນ ອິນທະປັນຍາ ໂທ: (856-20) 2989 8989 ໃນໂມງລັດຖະການ.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2022.**

**ລາຍລະອຽດ:**

ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2022 ໄດ້ຈັດຂຶ້ນໃນວັນທີ **29 ກໍລະກົດ 2022**, ຊຶ່ງບໍລິສັດໄດ້ມີການບັນທຶກກອງປະຊຸມດັ່ງກ່າວມີລາຍລະອຽດໃນ **ເອກະສານຄັດຕິດ 2** ທີ່ໄດ້ຄັດຕິດມາພ້ອມນີ້.

**ຄໍາເຫັນຂອງສະພາບໍລິຫານ:**

ບົດບັນທຶກກອງປະຊຸມ ມີຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2022, ວັນທີ 29 ກໍລະກົດ 2022.

**ຄະແນນສຽງທີ່ຕ້ອງໃຊ້:**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກໍານົດໄວ້ວ່າ ວາລະນີ້ ຕ້ອງຜ່ານມະຕິດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ.

**ວາລະທີ 2. ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ.**

**ລາຍລະອຽດ:**

ເພື່ອໃຫ້ບໍລິສັດ ສາມາດຊອກຫາແຫຼ່ງທຶນ ເພື່ອຮອງຮັບໃຫ້ແກ່ການຊໍາລະໜີ້ສິນເດີມທີ່ຈະຄົບກໍານົດ (Refinance) ໃນລະຫວ່າງປີ 2023-2024 ແລະ ສໍາລັບຄ່າໃຊ້ຈ່າຍທົ່ວໄປໃນການດໍາເນີນທຸລະກິດຂອງບໍລິສັດ ລວມເຖິງເງິນທຶນຫມູນວຽນຂອງບໍລິສັດ, ດັ່ງນັ້ນ ບໍລິສັດຈຶ່ງເຫັນສົມຄວນ ສະເໜີກອງປະຊຸມ ພິຈາລະນາອະນຸມັດແຜນການຊອກຫາແຫຼ່ງທຶນ ຜ່ານການອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ມີລາຍລະອຽດດັ່ງນີ້:

| | |
|---|---|
| ຈໍານວນວົງເງິນ: | ຈໍານວນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າໃນສະກຸນເງິນອື່ນໆ. |
| ຈຸດປະສົງ: | ເພື່ອໃຊ້ສໍາລັບເປົ້າໝາຍໃດໜຶ່ງ ຫຼື ຫຼາຍຢ່າງລວມກັນ ເຊັ່ນ: ການຊໍາລະຄືນໜີ້ສິນເດີມທີ່ຈະຄົບກໍານົດຂອງບໍລິສັດ (Refinance ເງິນກູ້ ແລະ/ຫຼື ຮຸ້ນກູ້ທີ່ອອກຈໍາໜ່າຍຜ່ານມາ), ຄ່າໃຊ້ຈ່າຍທົ່ວໄປໃນການເຄື່ອນໄຫວດໍາເນີນທຸລະກິດຂອງບໍລິສັດ ລວມເຖິງ ເງິນທຶນໝູນວຽນຂອງບໍລິສັດ. |
| ສະກຸນເງິນ: | ສະເໜີອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ກູ້ຢືມເງິນ ດ້ວຍສະກຸນເງິນໃດກໍໄດ້ ລວມທັງສະກຸນເງິນກີບລາວ, ບາດໄທ ແລະ/ຫຼື ໂດລາສະຫະລັດ. |
| ອັດຕາດອກເບ້ຍ: | ອັດຕາດອກເບ້ຍຂຶ້ນຢູ່ກັບຜົນການຈັດລໍາດັບຄວາມໜ້າເຊື່ອຖືຂອງບໍລິສັດ ແລະ ສະພາບຕະຫຼາດໃນຂະນະທີ່ສະເໜີຂາຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ໃນແຕ່ລະຄັ້ງ. |
| ອາຍຸຂອງຮຸ້ນກູ້ ແລະ ໄລຍະເວລາການກູ້ຢືມເງິນ: | ຕາມແຜນການນໍາໃຊ້ທຶນ ແລະ ສະພາບຂອງຕະຫຼາດໃນຊ່ວງໄລຍະເວລາທີ່ສະເໜີອອກຈໍາໜ່າຍຮຸ້ນກູ້ ແລະ/ຫຼື ໃນຂະນະທີ່ຈະກູ້ຢືມເງິນ ໃນແຕ່ລະຄັ້ງ. |
| ວິທີການສະເໜີຂາຍ: | ດ້ວຍວິທີການໃດໜຶ່ງ ຫຼື ຫຼາຍວິທີລວມກັນ ເຊັ່ນ:<br>(1) ບໍລິສັດ ສາມາດອອກແລະຈໍາໜ່າຍຮຸ້ນກູ້ ທັງໝົດຫຼືບາງສ່ວນ, ໃນຄັ້ງດຽວເຕັມຈໍານວນເງິນ ຫຼື ຫຼາຍຄັ້ງ, ເປັນຊຸດດຽວ ຫຼື ຫຼາຍຊຸດ ຕາມຄວາມຈໍາເປັນໃນການໃຊ້ເງິນຂອງບໍລິສັດ ເຊິ່ງອາດຈະສະເໜີອອກຈໍາໜ່າຍ ໃນຕະຫຼາດຂອງ ສປປ ລາວ, ຕະຫຼາດປະເທດໄທ ຫຼື ຕະຫຼາດສາກົນ ໂດຍຜ່ານຮູບແບບການອອກຈໍາໜ່າຍໃຫ້ແກ່ມວນຊົນ ແລະ/ຫຼື ໃນວົງຈໍາກັດ, ສະເໜີຈໍາໜ່າຍໃຫ້ແກ່ຜູ້ລົງທຶນປະເພດສະຖາບັນ ແລະ/ຫຼື ຜູ້ລົງທຶນລາຍໃຫຍ່ ໂດຍປະຕິບັດຕາມ |



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

| | |
|---|---|
| | ກົດໝາຍ ແລະ ກົດລະບຽບທີ່ກ່ຽວຂ້ອງ ແລະ ມີຜົນບັງຄັບໃຊ້ໃນໄລຍະເວລາທີ່ສະເໜີອອກຈຳໜ່າຍຮຸ້ນກູ້;<br>(2) ການກູ້ຢືມເງິນ ຈາກທະນາຄານຫຼືສະຖາບັນການເງິນຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ. |

ແລະສະເໜີກອງປະຊຸມວິສາມັນຜູ້ຖືຮຸ້ນ ມອບອຳນາດໃຫ້ ສະພາບໍລິຫານຂອງບໍລິສັດ ແລະ/ຫຼື ຜູ້ທີ່ໄດ້ຮັບມອບໝາຍ ຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການພິຈາລະນາ ແລະດຳເນີນວຽກງານ ກ່ຽວກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ, ມີລາຍລະອຽດດັ່ງຕໍ່ໄປນີ້:

(1) ພິຈາລະນາ ແລະ ກຳນົດວົງເງິນ ທີ່ຈະອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ, ລາຍລະອຽດທີ່ກ່ຽວຂ້ອງ ເຊັ່ນ ປະເພດຂອງຮຸ້ນກູ້, ເງິນກູ້ຢືມ, ຂໍ້ກຳນົດແລະເງື່ອນໄຂ, ໄລຍະເວລາການກູ້ຢືມຫລືອາຍຸຂອງຮຸ້ນກູ້, ມູນຄ່າການກູ້ຢືມ ແລະ/ຫຼື ມູນຄ່າອອກຈຳໜ່າຍຮຸ້ນກູ້, ອັດຕາດອກເບ້ຍ, ສະກຸນເງິນ, ໄລຍະເວລາໃນການອອກ ແລະ ສະເໜີຂາຍ, ວິທີການຈັດສັນ, ວິທີການສະເໜີຂາຍ, ລາຍລະອຽດການສະເໜີຂາຍ;

(2) ການເປີດເຜີຍຂໍ້ມູນ, ຕິດຕໍ່, ການໃຫ້ຂໍ້ຄວາມ, ການໃຫ້ຂໍ້ມູນ, ດັດແກ້, ເພີ່ມເຕີມ, ເຈລະຈາ, ຕົກລົງ, ລົງນາມ, ການສົ່ງມອບ ຄຳຮ້ອງຕ່າງໆ, ສັນຍາ ແລະ/ຫຼື ເອກະສານຕ່າງໆ ທີ່ຈຳເປັນ ແລະ ກ່ຽວຂ້ອງ ກັບການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມຈາກສະຖາບັນການເງິນ ໃຫ້ແກ່ບັນດາໜ່ວຍງານຕ່າງໆ ລວມມີແຕ່ບໍ່ຈຳກັດພຽງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ຕະຫຼາດຫຼັກຊັບລາວ, ທະນາຄານແຫ່ງ ສປປ ລາວ, ຄະນະກຳມະການກຳກັບຫຼັກຊັບແລະຕະຫຼາດຫຼັກຊັບ ປະເທດໄທ, ທະນາຄານແຫ່ງປະເທດໄທ, ສະມາຄົມຕະຫຼາດກາສານໜີ້ແຫ່ງປະເທດໄທ, ໜ່ວຍງານລັດຖະບານ ແລະ/ຫຼື ອົງການຂອງລັດ ຫຼື ນິຕິບຸກຄົນຫຼືບຸກຄົນໃດ ທີ່ກ່ຽວຂ້ອງ;

(3) ຄັດເລືອກ, ແຕ່ງຕັ້ງ, ຖອດຖອນ ບໍລິສັດທີ່ປຶກສາ, ຜູ້ຈັດຈຳໜ່າຍຫຼັກຊັບ, ຜູ້ຄ້ຳປະກັນການອອກຈຳໜ່າຍຫຼັກຊັບ, ຕົວແທນ, ທີ່ປຶກສາ, ຕົວແທນຜູ້ຖືຮຸ້ນກູ້, ຕົວແທນຜູ້ອອກຮຸ້ນກູ້, ນາຍທະບຽນ ແລະ ຕົວແທນຊຳລະ ແລະ/ຫຼື ບຸກຄົນອື່ນໆ ທີ່ຈຳເປັນໃຫ້ແກ່ການດຳເນີນທຸລະກຳຈົນສຳເລັດ;

(4) ເປີດບັນຊີທະນາຄານ ທີ່ກ່ຽວຂ້ອງກັບທຸລະກຳການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນ ກັບສະຖາບັນການເງິນ ໃນ ສປປ ລາວ, ປະເທດໄທ ຫຼື ປະເທດອື່ນໆ ສອດຄ່ອງຕາມກົດໝາຍແລະລະບຽບການທີ່ກ່ຽວຂ້ອງ;

(5) ປະຕິບັດແລະດຳເນີນວຽກງານອື່ນໆທີ່ຈຳເປັນແລະກ່ຽວຂ້ອງໄດ້ທຸກປະການ ເພື່ອໃຫ້ສຳເລັດທຸລະກຳດັ່ງກ່າວ, ລວມທັງໃຫ້ມີອຳນາດໃນການແຕ່ງຕັ້ງ ແລະ/ຫຼື ຖອດຖອນ ຜູ້ຮັບມອບອຳນາດ ໃນການດຳເນີນການໃດໜຶ່ງດັ່ງກ່າວຂ້າງເທິງນີ້.

**<u>ຄຳເຫັນຂອງສະພາບໍລິຫານ:</u>**

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມພິຈາລະນາຮັບຮອງການຊອກຫາແຫຼ່ງທຶນ ເພື່ອຮອງຮັບການຊຳລະໜີ້ສິນເດີມ ທີ່ຈະຄົບກຳນົດໃນລະຫວ່າງ ປີ 2023-2024 ແລະ ສຳລັບຄ່າໃຊ້ຈ່າຍທົ່ວໄປໃນການດຳເນີນທຸລະກິດ ຂອງບໍລິສັດ ລວມເຖິງເງິນທຶນໝູນວຽນ ຂອງບໍລິສັດ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ ໃນວົງເງິນບໍ່ເກີນ 500 ລ້ານໂດລາສະຫະລັດ ຫຼື ທຽບເທົ່າສະກຸນເງິນອື່ນໆ ລວມທັງການມອບອຳນາດດັ່ງກ່າວຂ້າງເທິງ.

**<u>ຄະແນນສຽງທີ່ຕ້ອງໃຊ້:</u>**

ກົດໝາຍວ່າດ້ວຍວິສາຫະກິດໄດ້ກຳນົດໄວ້ວ່າ ວາລະນີ້ ຕ້ອງລົງມະຕິດ້ວຍຄະແນນສຽງຂອງຜູ້ຖືຮຸ້ນຫລື ຜູ້ຕາງໜ້າຜູ້ຖືຮຸ້ນຢ່າງໜ້ອຍ ສອງສ່ວນສາມ (2/3) ຂອງຜູ້ເຂົ້າຮ່ວມກອງປະຊຸມ ແລະມີຮຸ້ນລວມກັນຢ່າງໜ້ອຍ (80%) ສ່ວນຮ້ອຍຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

# ບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022


ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ
ກອງປະຊຸມວິສາມັນຜູ້ຖືຮຸ້ນ

ນະຄອນຫຼວງວຽງຈັນ, ວັນທີ 08/08/2022

# ບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປີ 2022
# ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ປະຊຸມເມື່ອວັນທີ 29 ກໍລະກົດ 2022 ເວລາ 15:00 ໂມງ ທີ່ຫ້ອງປະຊຸມໃຫຍ່ຊັ້ນ 1, ສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ໂດຍ ທ່ານ ຈັນທະບູນ ສຸກອາລຸນ ຮອງປະທານສະພາບໍລິຫານ ບໍລິສັດ ເປັນປະທານກອງປະຊຸມ; ເນື່ອງຈາກທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ ປະທານສະພາບໍລິຫານຕິດພາລະກິດບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້, ຈຶ່ງໄດ້ມອບສິດໃຫ້ທ່ານຮອງປະທານສະພາບໍລິຫານດຳເນີນການເປັນປະທານກອງປະຊຸມແທນ. ກອງປະຊຸມມີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງຈຳນວນ 29 ທ່ານ ແລະ ມອບສັນທະຈຳນວນ 26 ທ່ານ, ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 55 ທ່ານ ຖືຮຸ້ນລວມກັນທັງໝົດ 1.519.913.222 ຮຸ້ນ ເທົ່າກັບ 90,51 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ, ຖືວ່າຄົບອົງປະຊຸມຕາມກົດໝາຍ ແລະ ລະບຽບການ ຂອງ ບໍລິສັດ.

ປະທານກອງປະຊຸມ ໄດ້ແນະນຳກຳມະການສະພາບໍລິຫານແຕ່ລະທ່ານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງທີ່ເຂົ້າຮ່ວມປະຊຸມ ດັ່ງນີ້:

1. **ທ່ານ ຈັນທະບູນ ສຸກອາລຸນ** ຕຳແໜ່ງ: ຮອງປະທານສະພາບໍລິຫານ/ຜູ້ອຳນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ;
2. **ທ່ານ ວັນແສງ ວັນນະວົງ** ຕຳແໜ່ງ: ຮັກສາການຜູ້ອຳນວຍການໃຫຍ່ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ;
3. **ທ່ານ ສົມພິດ ແກ້ວວິຈິດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຫົວໜ້າກົມທຸລະກິດພະລັງງານ, ກະຊວງພະລັງງານ ແລະ ບໍ່ແຮ່;
4. **ທ່ານ ນາງ ມະນີວອນ ພົນອາມາດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຮອງຫົວໜ້າກົມຄຸ້ມຄອງໜີ້ສິນສາທາລະນະ, ກະຊວງການເງິນ;
5. **ທ່ານ ສົມລັດ ເມກອາກາດ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການບໍລິສັດ ພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈຳກັດ;
6. **ທ່ານ ຊິນລະວົງ ວິນິດໄສ** ຕຳແໜ່ງ: ກຳມະການສະພາບໍລິຫານ/ຜູ້ອຳນວຍການບໍລິສັດ ຣາຊ໌ລາວ ບໍລິການຈຳກັດ;
7. **ທ່ານ ຄຳມູນ ວົງພິງໄຊ** ຕຳແໜ່ງ: ກຳມະການສະພາບໍລິຫານອິດສະຫຼະ/ອາດີດຮອງລັດຖະມົນຕີກະຊວງພາຍໃນ;


ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**໘. ທ່ານ ຄໍາແກ້ວ ວິສີສົມບັດ** ຕໍາແໜ່ງ: ກໍາມະການສະພາບໍລິຫານອິດສະຫຼະ/ຫົວໜ້າກົມບໍລິການທະນາຄານ, ທະນາຄານແຫ່ງ ສປປລາວ;

**໙. ທ່ານ ປອ. ພັນປະກິດ ອ່ອນພັນດາລາ** ຕໍາແໜ່ງ: ກໍາມະການສະພາບໍລິຫານອິດສະຫຼະ / ຮອງຫົວໜ້າກົມຄົ້ນຄວ້າສັງລວມ, ຫ້ອງວ່າການສູນກາງພັກ (ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ).

ໂດຍອີງປະຊຸມມີ 09 ທ່ານ ຂາດປະຊຸມ 02 ທ່ານ ເນື່ອງຈາກຕິດພາລະກິດທາງການບໍ່ສາມາດເຂົ້າຮ່ວມກອງປະຊຸມໄດ້ຄື: **ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ** ຕໍາແໜ່ງ: ປະທານສະພາບໍລິຫານ / ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ **ທ່ານ ພົງສະຫວັດ ເສນາພອນ** ຕໍາແໜ່ງ: ກາມະການສະພາບໍລິຫານ / ປະທານບໍລິສັດພົງຊັບທະວີກໍ່ສ້າງຂົວທາງ, ເຄຫາສະຖານ ແລະ ຊົນລະປະທານ ຈາກັດ.

ພ້ອມດຽວກັນນີ້, ກໍຍັງມີ ທ່ານຜູ້ຕາງໜ້າຈາກສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ, ຜູ້ຕາງໜ້າຈາກຕະຫຼາດຫຼັກຊັບລາວ, ບັນດາທ່ານຮອງຜູ້ອໍານວຍການໃຫຍ່ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຮອງຜູ້ອໍາ ນວຍການໃຫຍ່ ລັດວິສາຫະກິດໄຟຟ້າລາວ, ຄະນະຜູ້ອໍານວຍການຝ່າຍຂອງບໍລິສັດ, ຄະນະກວດກາການດໍາເນີນກອງປະຊຸມ ແລະ ລົງຄະແນນສຽງ, ຄະນະຕິດຕາມ ແລະ ປະເມີນການດໍາເນີນກອງປະຊຸມຜູ້ຖືຮຸ້ນ ເຂົ້າຮ່ວມກອງປະຊຸມ ແລະ ພະແນກກວດສອບພາຍໃນ ຂອງ ບໍລິສັດ ເຂົ້າຮ່ວມກອງປະຊຸມຄັ້ງນີ້.

ນອກຈາກນັ້ນ, ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ພວກເຮົາກໍໄດ້ເອົາໃຈໃສ່ປະຕິບັດຕາມຄໍາແນະນໍາ ແລະ ມາດຕະການທີ່ຄະນະສະເພາະກິດໄດ້ກໍານົດ ໂດຍການຈັດກອງປະຊຸມທັງແບບຊ້ອງໜ້າ ແລະ ແບບອອນລາຍ ເພື່ອໃຫ້ຜູ້ຖືຮຸ້ນສາມາດເຂົ້າຮ່ວມໄດ້ຕາມຄວາມສະດວກຂອງແຕ່ລະທ່ານ. ສໍາລັບບັນດາທ່ານທີ່ເຂົ້າຮ່ວມກອງປະຊຸມໃນຫ້ອງປະຊຸມແມ່ນໄດ້ໃສ່ຜ້າອັດປາກ ແລະ ນັ່ງເວັ້ນໄລຍະຫ່າງຕາມທີ່ພິທີການໄດ້ກໍານົດໄວ້ ແລະ ບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍ ແມ່ນໄດ້ປະຕິບັດຕາມຄູ່ມືທີ່ໄດ້ແຈກຢາຍໃຫ້ພ້ອມກັບບັດເຊີນປະຊຸມ.

ຫຼັງຈາກນັ້ນ ປະທານກອງປະຊຸມ ໄດ້ມອບໃຫ້ ທ່ານ ວັນແສງ ວັນນະວົງ ຮັກສາການຜູ້ອໍານວຍການໃຫຍ່ ຂອງບໍລິສັດ ອະທິບາຍກ່ຽວກັບວິທີການລົງຄະແນນສຽງໃຫ້ທີ່ປະຊຸມຊາບ ແລະ ລາຍງານແຕ່ລະວາລະຂອງການປະຊຸມ, ຊຶ່ງລາຍລະອຽດມີດັ່ງນີ້:

**1. ການລົງຄະແນນສຽງ:**

- ທ່ານຜູ້ຖືຮຸ້ນໜຶ່ງທ່ານມີຄະແນນສຽງເທົ່າກັບຈານວນຮຸ້ນທັງໝົດທີ່ທ່ານຖືຢູ່ ໂດຍໜຶ່ງຮຸ້ນເທົ່າກັບໜຶ່ງສຽງ.
- ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ປະທານຈະຖາມກອງປະຊຸມວ່າ ມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ.

ທ່ານປະທານໄດ້ກ່າວໄປແລ້ວໃນເບື້ອງຕົ້ນ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ຜ-ຟຟລ ໃນປີນີ້ ແມ່ນຈະມີການຈັດກອງປະຊຸມແບບຊ້ອງໜ້າ ແລະ ແບບອອນລາຍ. ຕໍ່ໄປ ຂ້າພະເຈົ້າຂໍແນະນໍາວິທີການລົງຄະແນນໃນແຕ່ລະຮູບແບບການເຂົ້າປະຊຸມ ດັ່ງນີ້:

ທ່ານທີ່ເຂົ້າຮ່ວມກອງປະຊຸມແບບຊ້ອງໜ້າ: ຖ້າຫາກມີຜູ້ຖືຮຸ້ນທ່ານໃດບໍ່ເຫັນດີ ໃຫ້ທ່ານນັ້ນກາເຄື່ອງໝາຍໃສ່ຊ່ອງການລົງມະຕິບໍ່ເຫັນດີ ໃນບັດລົງຄະແນນ ທີ່ເຈົ້າໜ້າທີ່ໄດ້ແຈກຢາຍໃຫ້ກ່ອນເຂົ້າປະຊຸມ ແລະ ຍົກບັດທີ່ກາເຄື່ອງໝາຍນັ້ນຂຶ້ນສູງໆ ຈົນກວ່າຈະມີເຈົ້າໜ້າທີ່ມາເກັບບັດລົງຄະແນນ ເພື່ອນໍາໄປກວດນັບຄະແນນສຽງໃນວາລະນັ້ນໆ ແລະ ສໍາລັບຜູ້ຖືຮຸ້ນທີ່ບໍ່ໄດ້ຍົກບັດ ຖືວ່າຜູ້ຖືຮຸ້ນທ່ານນັ້ນ ມີມະຕິເຫັນດີຕາມທີ່ສະເໜີໃນກອງປະຊຸມ. ຖ້າຫາກບໍ່ມີຜູ້ຖືຮຸ້ນທ່ານໃດຍົກບັດ ໃຫ້ຖືວ່າເຫັນດີ ຕາມເລື່ອງທີ່ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ, ແຕ່ຍົກເວັ້ນກໍລະນີທີ່ຜູ້ຖືຮຸ້ນໄດ້



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ເຮັດເຄື່ອງໝາຍໃນໃບມອບສັນທະໄວ້ຢ່າງຈະແຈ້ງແລ້ວວ່າ ຈະລົງມະຕິບໍ່ເຫັນດີ, ຊຶ່ງບໍລິສັດໄດ້ບັນທຶກຄະແນນສຽງທີ່ບໍ່ເຫັນດີດັ່ງກ່າວນັ້ນໄວ້ແລ້ວ.

ທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມແບບອອນລາຍ: ສາມາດລົງຄະແນນສຽງຜ່ານລະບົບປະຊຸມອອນລາຍ ໂດຍລາຍລະອຽດຂັ້ນຕອນ ແລະ ວິທີການຕ່າງໆ ແມ່ນທ່ານສາມາດເຂົ້າເບິ່ງໄດ້ໃນຄູ່ມືທີ່ໄດ້ຄັດຕິດໃນໜັງສືແຈ້ງເຊີນ ແລະ ໄດ້ເປີດເຜີຍໃຫ້ຊາບແລ້ວ ແລະ ບັນດາທ່ານຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບອອນລາຍຊາບວ່າ ຄຳຖາມທີ່ບັນດາທ່ານຜູ້ຖືຮຸ້ນໄດ້ສົ່ງມາ ຕາມການແນະນຳທີ່ໄດ້ລະບຸໄວ້ລະອຽດແລ້ວໃນໜັງສືຮຽນເຊີນປະຊຸມຜູ້ຖືຮຸ້ນ ທີ່ໄດ້ເປີດເຜີຍໄປແລ້ວ ແລະ ບໍລິສັດຈະຕອບຄຳຖາມຂອງແຕ່ລະທ່ານໃນບົດບັນທຶກກອງປະຊຸມຜູ້ຖືຮຸ້ນ.

ສຳລັບຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນ ແລະ ໃຫ້ຜູ້ຕາງໜ້າລົງຄະແນນສຽງ ຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຕາມທີ່ຜູ້ຖືຮຸ້ນໄດ້ລະບຸໄວ້ໃນໃບມອບສັນທະນັ້ນ, ບໍລິສັດໄດ້ນຳເອົາການລົງຄະແນນສຽງຕາມທີ່ຜູ້ຖືຮຸ້ນລະບຸໄວ້ໃນໃບມອບສັນທະດັ່ງກ່າວ ໄປບັນທຶກລວມຄະແນນໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເປັນທີ່ຮຽບຮ້ອຍແລ້ວ ເພື່ອເປັນຄວາມສະດວກໃຫ້ແກ່ຜູ້ຕາງໜ້າ ໂດຍຜູ້ຕາງໜ້າບໍ່ຕ້ອງລົງຄະແນນສຽງ ໃນບັດລົງຄະແນນໃນກອງປະຊຸມຕື່ມອີກ.

**2. ການນັບຜົນການລົງຄະແນນສຽງ**

ການນັບຜົນການລົງຄະແນນສຽງໃນແຕ່ລະວາລະ ແມ່ນໄດ້ນັບຄະແນນສຽງຂອງຜູ້ຖືຮຸ້ນໃນກອງປະຊຸມ ແລະ ຄະແນນສຽງຂອງຜູ້ຖືຮຸ້ນທີ່ມອບໝາຍໃຫ້ຜູ້ຕາງໜ້າທີ່ບໍລິສັດໄດ້ບັນທຶກໄວ້ລ່ວງໜ້າ ໃນເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມປະຊຸມ ທີ່ອອກສຽງບໍ່ເຫັນດີມາຫັກລົບອອກ ຈາກຈຳນວນຮຸ້ນທັງໝົດ ຂອງຜູ້ທີ່ມາເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງໃນແຕ່ລະວາລະ.

ປະທານກອງປະຊຸມຈະປະກາດຜົນການລົງຄະແນນສຽງໃນແຕ່ລະວາລະ ໃຫ້ກອງປະຊຸມຮັບຊາບຫຼັງຈາກການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງ ໂດຍຈະແຍກຄະແນນສຽງເຫັນດີ ແລະ ບໍ່ເຫັນດີວ່າມີຈັກສຽງ ແລະ ເປັນຈຳນວນຈັກສ່ວນຮ້ອຍ, ກໍລະນີມີຜູ້ຖືຮຸ້ນທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງທີ່ປະທານໄດ້ປະກາດໃຫ້ກອງປະຊຸມຮັບຊາບຜົນການລົງຄະແນນສຽງໃນແຕ່ລະວາລະສິ້ນສຸດລົງແລ້ວນັ້ນ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມານັບເປັນຄະແນນສຽງຕື່ມອີກ.

ໂດຍອີງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ, ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຂອງ ບໍລິສັດໃນຄັ້ງນີ້ ບໍ່ອະນຸຍາດໃຫ້ຜູ້ສັງເກດການ ມີຄຳຖາມໃນເວລາດຳເນີນການປະຊຸມ, ມີພຽງແຕ່ຜູ້ຖືຮຸ້ນເທົ່ານັ້ນມີສິດຕັ້ງຄຳຖາມ ແລະ ປະກອບຄຳຄິດຄຳເຫັນ ກ່ຽວກັບວາລະການປະຊຸມ.

ຫຼັງຈາກນັ້ນ, ຮັກສາການຜູ້ອຳນວຍການໃຫຍ່ ໄດ້ເລີ່ມເຂົ້າສູ່ວາລະກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022 ໂດຍໄດ້ລາຍງານເປັນແຕ່ລະວາລະ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

**ວາລະທີ 1. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021**

ຮັກສາການຜູ້ອຳນວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມກ່ຽວກັບບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021, ໄດ້ປະຊຸມເມື່ອວັນທີ 27 ເມສາ 2022 ໂດຍມີລາຍລະອຽດໃນເອກະສານຄັດຕິດ ເຊິ່ງໄດ້ຄັດຕິດພ້ອມກັບໜັງສືແຈ້ງເຊີນ ແລະ ສະພາບໍລິຫານໄດ້ຮັບຮອງຄວາມຖືກຕ້ອງ ແລະ ຄົບຖ້ວນແລ້ວ, ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນດັ່ງກ່າວ.

ຫຼັງຈາກ ຮັກສາການຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 1 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດ ໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.


ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມວ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຈາກນັ້ນ ປະທານໄດ້ສະເໜີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2021 ດັ່ງກ່າວ, ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງເອົາບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈໍາປີ 2021, ວັນທີ 27 ເມສາ 2022, ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງຂອງຈໍານວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈໍານວນ 1.519.913.222 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈໍານວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ**

**ວາລະທີ 2. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງຮັກສາການຜູ້ອໍານວຍການໃຫຍ່ ແລະ ກໍາມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກໍາມະການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ອາຍຸການຂອງກໍາມະການສະພາບໍລິຫານບໍລິ ສັດ.**

ຮັກສາການຜູ້ອໍານວຍການໃຫຍ່ ໄດ້ລາຍງານຕໍ່ທີ່ປະຊຸມ ໂດຍອີງຕາມແຜນການດາເນີນທຸລະກິດຂອງບໍລິສັດທີ່ນັບມື້ຈະເຕີບໃຫຍ່ຂື້ນເລື້ອຍໆ ແລະ ເພື່ອເຮັດໃຫ້ການດໍາເນີນທຸລະກິດຂອງບໍລິສັດບັນລຸເປົ້າໝາຍທີ່ວາງໄວ້. ບໍລິສັດເຫັນສົມຄວນ ສະເໜີແຕ່ງຕັ້ງຮັກສາການຜູ້ອໍານວຍການໃຫຍ່, ໂດຍມີຊີວະປະຫວັດຫຍໍ້ ໃນເອກະສານຄັດຕິດ 3 ແລະ ມີລາຍຊື່ດັ່ງລຸ່ມນີ້:

1) ແຕ່ງຕັ້ງ ທ່ານ ວັນແສງ ວັນນະວົງ ເປັນຮັກສາການຜູ້ອໍານວຍການໃຫຍ່ ທັງເປັນກໍາມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນກໍາມະການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ກໍານົດອາຍຸການຂອງກໍາມະການສະພາບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2022 ເປັນຕົ້ນໄປ.

ສະພາບໍລິຫານ ໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນພິຈາລະນາຮັບຮອງເອົາການແຕ່ງຕັ້ງຮັກສາການຜູ້ອໍານວຍການໃຫຍ່ ແລະ ກໍາມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກໍາມະການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ອາຍຸການຂອງກໍາມະການສະພາບໍລິຫານບໍລິສັດ.

ຫຼັງຈາກຮັກສາການຜູ້ອໍານວຍການໃຫຍ່ ໄດ້ລາຍງານໂດຍຫຍໍ້ ກ່ຽວກັບວາລະທີ 2 ແລ້ວ, ປະທານກອງປະຊຸມ ໄດ້ເປີດໂອກາດ ເຊີນຜູ້ຖືຮຸ້ນປະກອບຄໍາຄິດຄໍາເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄໍາຖາມ ສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄໍາຖາມ.

ຈາກນັ້ນປະທານກອງປະຊຸມຈຶ່ງໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ຮັບຮອງເອົາການແຕ່ງຕັ້ງຮັກສາການຜູ້ອໍານວຍການໃຫຍ່ ແລະ ກໍາມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກໍາມະການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ອາຍຸການຂອງກໍາມະການສະພາບໍລິຫານບໍລິສັດ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈໍານວນສຽງທັງໝົດຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

**ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີຮັບຮອງການແຕ່ງຕັ້ງຮັກສາການຜູ້ອໍານວຍການໃຫຍ່ ແລະ ກໍາມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກໍາມະການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ອາຍຸການຂອງກໍາມະການສະພາບໍລິຫານບໍລິສັດຄື:**

**1) ແຕ່ງຕັ້ງ ທ່ານ ວັນແສງ ວັນນະວົງ ເປັນຮັກສາການຜູ້ອໍານວຍການໃຫຍ່ ທັງເປັນກໍາມະການສະພາບໍລິຫານຜູ້ໃໝ່ ເພື່ອສືບຕໍ່ປະຕິບັດໜ້າທີ່ບໍລິຫານບໍລິສັດ ແທນກໍາມະ**



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**ການສະພາບໍລິຫານຜູ້ເກົ່າທີ່ໄປຮັບໜ້າທີ່ໃໝ່ ແລະ ກຳນົດອາຍຸການຂອງກຳມະການສະພາບໍລິຫານບໍ່ເກີນສອງປີ ໂດຍເລີ່ມນັບແຕ່ມື້ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1/2022 ເປັນຕົ້ນໄປ.**

**ກອງປະຊຸມມີມະຕິ ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງ ຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ດັ່ງນີ້:**

- **ເຫັນດີຈຳນວນ 1.519.913.222 ສຽງ ເທົ່າກັບ 100 ສ່ວນຮ້ອຍ ຂອງຈຳນວນສຽງທັງໝົດທີ່ເຂົ້າຮ່ວມກອງປະຊຸມ.**

**ວາລະທີ 3. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ.**

ຮັກສາການຜູ້ອຳນວຍການໃຫຍ່ ໄດ້ສະເໜີຕໍ່ທີ່ປະຊຸມ ເນື່ອງຈາກມີການປ່ຽນແປງກຳມະການສະພາບໍລິຫານ ຂອງບໍລິສັດ ແລະ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງບໍລິຫານຂອງບໍລິສັດ ດຳເນີນການໃຫ້ຖືກຕ້ອງ ແລະ ສອດຄ່ອງຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ສະເໜີກອງປະຊຸມພິຈາລະນາຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍ ກຳມະການສະພາບໍລິຫານ ເພື່ອປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານຜູ້ໃໝ່ ເພື່ອປ່ຽນແທນກຳມະການສະພາບໍລິຫານຜູ້ເກົ່າ ທີ່ໄປຮັບໜ້າທີ່ໃໝ່ຄື:

- ຊື່ ແລະ ນາມສະກຸນ: ທ່ານ ວັນແສງ ວັນນະວົງ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ບ້ານ ທົ່ງປົ່ງ, ໜ່ວຍ 31, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

ແລະ ມອບອານາດໃຫ້ຜູ້ອານວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼືຄຳສັ່ງໃຫ້ດັດແກ້.

ສະພາບໍລິຫານໄດ້ພິຈາລະນາຢ່າງລະອຽດແລ້ວ ເຫັນດີໃຫ້ກອງປະຊຸມວິສາມັນຜູ້ຖືຮຸ້ນ ພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ລວມທັງການມອບອຳນາດຕາມທີ່ໄດ້ສະເໜີດັ່ງກ່າວທຸກປະການ.

ຫຼັງຈາກຮັກສາການຜູ້ອຳນວຍການໃຫຍ່ ລາຍງານໂດຍຫຍໍ້ກ່ຽວກັບວາລະທີ 3 ແລ້ວ, ປະທານກອງປະຊຸມໄດ້ເປີດໂອກາດໃຫ້ຜູ້ຖືຮຸ້ນປະກອບຄຳຄິດຄຳເຫັນ ແລະ ຜູ້ຖືຮຸ້ນທ່ານໃດມີຄຳຖາມສາມາດຖາມໄດ້, ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ເວລາຕໍ່ມາ ປະທານກອງປະຊຸມ ໄດ້ສະເໜີໃຫ້ກອງປະຊຸມພິຈາລະນາ ແລະ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ລວມທັງການມອບອຳນາດດັ່ງກ່າວ. ວາລະນີ້ກອງປະຊຸມຈະຕ້ອງລົງມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ຖືຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດ.

**ມະຕິ: ກອງປະຊຸມໄດ້ພິຈາລະນາແລ້ວ ແລະ ມີມະຕິເຫັນດີ ຮັບຮອງການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ດັ່ງນີ້:**



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

1) <u>ດັດແກ້ມາດຕາ 9 ວ່າດ້ວຍກຳມະການ:</u> ປ່ຽນຊື່ ແລະ ຂໍ້ມູນຂອງກຳມະການສະພາບໍລິຫານຜູ້ໃໝ່ດັ່ງນີ້:
- ຊື່ ແລະ ນາມສະກຸນ: ທ່ານ ອັນແສງ ອັນນະວົງ
- ສັນຊາດ: ລາວ;
- ທີ່ຢູ່ປະຈຸບັນ: ບ້ານ ທົ່ງປົ່ງ, ໜ່ວຍ 31, ເມືອງ ສີໂຄດຕະບອງ, ແຂວງ ນະຄອນຫຼວງວຽງຈັນ.

ແລະ ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ແລະ/ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການດັດແກ້ເນື້ອໃນກົດລະບຽບຂອງບໍລິສັດ ໃນເລື່ອງດັ່ງກ່າວຂ້າງເທິງ ລວມທັງມີອຳນາດດັດແກ້ເນື້ອໃນກົດລະບຽບຂອງບໍລິສັດຕາມທີ່ເຈົ້າໜ້າທີ່ທະບຽນວິສາຫະກິດ ແລະ/ຫຼື ເຈົ້າໜ້າທີ່ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ລວມທັງຕະຫຼາດຫຼັກຊັບລາວມີຄຳແນະນຳ ແລະ/ຫຼື ຄຳສັ່ງໃຫ້ດັດແກ້.

ກອງປະຊຸມໄດ້ມີມະຕິອະນຸມັດດ້ວຍຄະແນນສຽງຫຼາຍກວ່າສອງສ່ວນສາມ (2/3) ຂອງຈຳນວນສຽງທີ່ເຂົ້າຮ່ວມກອງປະຊຸມ ແລະ ມີຮຸ້ນລວມກັນຫຼາຍກວ່າແປດສິບສ່ວນຮ້ອຍ (80%) ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດດັ່ງນີ້:

(ກ) ຈຳນວນຜູ້ຖືຮຸ້ນ ທີ່ເຂົ້າຮ່ວມກອງປະຊຸມ:
1. ເຫັນດີຈຳນວນ 55 ຄົນ ເທົ່າກັບ 100 ສ່ວນຮ້ອຍ ທຽບໃສ່ຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ.

(ຂ) ຈຳນວນສຽງ (ຮຸ້ນ) ຂອງຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມ:
1. ເຫັນດີ 1.519.913.222 ສຽງ (ຮຸ້ນ) ເທົ່າກັບ 90,508538 ສ່ວນຮ້ອຍ ທຽບໃສ່ຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ຖືວ່າໄດ້ພິຈາລະນາຄົບວາລະກອງປະຊຸມແລ້ວ, ແລະ ປະທານໄດ້ສະເໜີທີ່ປະຊຸມເພື່ອປະກອບຄຳຄິດຄຳເຫັນຕື່ມ ແລະ ຊັກຖາມຂໍ້ຂ້ອງໃຈອື່ນໆ ແຕ່ບໍ່ມີຜູ້ຖືຮຸ້ນທ່ານໃດມີຄຳຖາມ.

ໃນຕອນທ້າຍຂອງການປະຊຸມ ປະທານກອງປະຊຸມ ໄດ້ແຈ້ງໃຫ້ທີ່ປະຊຸມຊາບກ່ຽວກັບຈຳນວນຜູ້ຖືຮຸ້ນທີ່ເຂົ້າຮ່ວມກອງປະຊຸມມີຈຳນວນຜູ້ຖືຮຸ້ນເຂົ້າຮ່ວມປະຊຸມດ້ວຍຕົນເອງມີຈຳນວນ 29 ທ່ານ ແລະ ມີຜູ້ຕາງໜ້າເຂົ້າຮ່ວມປະຊຸມແທນຜູ້ຖືຮຸ້ນຈຳນວນ 26 ທ່ານ ລວມຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມທັງໝົດ 55 ຄົນ ຖືຮຸ້ນລວມກັນ 1.519.913.222 ຮຸ້ນ ເທົ່າກັບ 90,51 ສ່ວນຮ້ອຍ ຂອງຈຳນວນຮຸ້ນທີ່ຖອກແລ້ວທັງໝົດຂອງບໍລິສັດ.

ແລະ ຕໍ່ມາປະທານກອງປະຊຸມ ໄດ້ກ່າວຄຳຂອບໃຈບັນດາທ່ານຜູ້ຖືຮຸ້ນທຸກທ່ານ ທີ່ເຂົ້າຮ່ວມກອງປະຊຸມໃນມື້ນີ້ ແລະ ຂໍອວຍພອນໄຊແດ່ ບັນດາຄະນະຜູ້ບໍລິຫານບໍລິສັດ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານ, ຂໍອວຍພອນໄຊແດ່ ທ່ານ ຜູ້ຖືຮຸ້ນທຸກທ່ານ ແລະ ບັນດາແຂກທີ່ມີກຽດທຸກທ່ານ ຈົ່ງມີສຸຂະພາບເຂັ້ມແຂງ ປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກປະການ.

ກອງປະຊຸມໄດ້ພິຈາລະນາຄົບຖ້ວນຕາມວາລະກອງປະຊຸມແລ້ວ, ບໍ່ມີເລື່ອງໃດທີ່ຈະພິຈາລະນາຕື່ມ, ປະ ທານກອງປະຊຸມ ໄດ້ກ່າວປິດກອງປະຊຸມເວລາ 15:30 ໂມງ.


ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**ປະທານກອງປະຊຸມ**

ຈັນທະບູນ ສຸກອາລຸນ

**ຮັບຮອງຖືກຕ້ອງ**

ວັນແສງ ວັນນະວົງ



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

# ໃບມອບສັນທະ
# PROXY

ຂຽນທີ່................
Written at

ວັນທີ.............. ເດືອນ.............................. ປີ..........
Date Month Year

(1) ຂ້າພະເຈົ້າ.......................................... ສັນຊາດ.............. ວັນທີ, ເດືອນ ແລະ ປີເກີດ.....
I/We Nationality date, month and year of birth

ບັດປະຈຳຕົວເລກທີ.................. ຢູ່ເຮືອນເລກທີ.............. ບ້ານ................ ຖະໜົນ........................ ID card number Reside at Village Road

ເມືອງ.............................. ແຂວງ..................................................
District Province

(2) ເປັນຜູ້ຖືຮຸ້ນ ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ.
Being a shareholder of EDL-Generation Public Company.

ໂດຍຖືຮຸ້ນສາມັນຈຳນວນລວມທັງໝົດ.......................................... ຮຸ້ນຊຶ່ງເທົ່າກັບຈຳນວນສຽງທີ່ຈະລົງຄະແນນສຽງໄດ້.
holding the ordinary shares in the total amount of shares, which are equivalent to the same number of votes.

(3) ຂໍມອບໝາຍໃຫ້
Hereby appoint

(1) ☐ ທ່ານ/ທ່ານນາງ.......................................... ອາຍຸ.............. ປີ,ຢູ່ເຮືອນເລກທີ..............
Mr./Ms. age years, reside at

ຖະໜົນ.............................. ບ້ານ.............................................. ເມືອງ..................
Road Village District

ແຂວງ.............................. ລະຫັດໄປສະນີ.......................................... ຫຼື
Province Postal Code or

(2) ☐ ທ່ານ ຄຳມູນ ວິພົງໄຊ.......................................... ອາຍຸ 65 ປີ, ຢູ່ເຮືອນເລກທີ 390
Mr. Khammoune VIPHONGXAY age 65 years, resides at 390

ຖະໜົນ.............................. ບ້ານ ...........ໂພນສະຫວ່າງ... ເມືອງ ຈັນທະບູລີ
Road Village Phonsavang District Chanthabouly

ແຂວງ ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392 ຫຼື
Province Postal Code 2392 or

(3) ☐ ທ່ານ ຄຳແກ້ວ ວິສີສົມບັດ.......................................... ອາຍຸ 48 ປີ,ຢູ່ເຮືອນເລກທີ 015
Mr. Khamkeo VISISOMBATH age 48 years, resides at 015

ຖະໜົນ.............................. ບ້ານ.........ໂພນໄຊ ເມືອງ ໄຊເສດຖາ
Road Village Phonxay District Xaysetha

ແຂວງ.................ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392 ຫຼື
Province Postal Code 2392 or

(4) ☐ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ອາຍຸ 44 ປີ, ຢູ່ເຮືອນເລກທີ............593.............
Dr. Phanhpakit ONPHANHDALA age 44 years, resides at 593

ຖະໜົນ............ ບ້ານ.................... ຫ້ວຍຫົງ.............................. ເມືອງ ຈັນທະບູລີ
Road Village Houyhong District Chanthabouly

ແຂວງ ນະຄອນຫຼວງວຽງຈັນ ລະຫັດໄປສະນີ 2392
Vientiane Capital Postal Code 2392



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ຄົນໃດຄົນໜຶ່ງພຽງຄົນດຽວ ເປັນຜູ້ຕາງໜ້າຂອງຂ້າພະເຈົ້າ ເພື່ອເຂົ້າຮ່ວມປະຊຸມ ແລະ ລົງຄະແນນສຽງແທນຂ້າພະເຈົ້າ ໃນກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປີ 2023 ໃນວັນທີ 30 ມັງກອນ 2023 ເວລາ 15:00 ໂມງ.

Any one of them to be my/our proxy to attend and vote on my/our behalf at the Extraordinary General Shareholders' Meeting No. 1/2023 to be held on 30 January 2023 at 3:00 pm.

ສະຖານທີ່ຫ້ອງປະຊຸມ ຊັ້ນທີ 1 ອາຄານສຳນັກງານ ລັດວິສາຫະກິດໄຟຟ້າລາວ, ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫຼວງວຽງຈັນ ຫຼື ທີ່ໄດ້ເລື່ອນໄປໃນວັນ, ເວລາ ແລະ ສະຖານທີ່ອື່ນດ້ວຍ.

At meeting room, 1st floor, EDL Headquarter building, Lao-Thai Friendship Road, Thongkang Village, Sisattanak District, Vientiane Capital or any adjournment at any date, time and place thereof.

(4) ຂ້າພະເຈົ້າຂໍມອບໝາຍໃຫ້ຜູ້ຕາງໜ້າລົງຄະແນນສຽງແທນຂ້າພະເຈົ້າໃນກອງປະຊຸມຄັ້ງນີ້ດັ່ງນີ້:

I/We hereby authorize the proxy to vote on my/our behalf at this meeting as follows:

☐ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະລົງມະຕິແທນຂ້າພະເຈົ້າໄດ້ທຸກປະການຕາມທີ່ເຫັນສົມຄວນ;
To grant my/our proxy to consider and vote on my/our behalf as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າແລະມີສິດພິຈາລະນາແລະລົງມະຕິແທນຂ້າພະເຈົ້າໃນບາງວາລະ;
To grant my/our proxy to vote as per my/our intention and consider and vote on my/our behalf in some agendas as he/she may deem appropriate in all respects;

☐ ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຂ້າພະເຈົ້າ.
To grant my/our proxy to vote as per my/our intention

**ວາລະທີ 1: ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2022.**

**Agenda No. 1 To consider and adopt the Minutes of the Extraordinary General Shareholders' Meeting No.1/2022**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

**ວາລະທີ 2: ພິຈາລະນາ ແລະ ອະນຸມັດການຊອກຫາແຫຼ່ງທຶນ ໂດຍຜ່ານການອອກຈຳໜ່າຍຮຸ້ນກູ້ ແລະ/ຫຼື ການກູ້ຢືມເງິນຈາກສະຖາບັນການເງິນ.**

**Agenda No. 2 To consider and approve the capital raising plan through debenture issuances and/or borrowings from financial institutions.**

☐ ເຫັນດີ Approve ☐ ບໍ່ເຫັນດີ Disapprove

(5) ການລົງຄະແນນສຽງຂອງຜູ້ຕາງໜ້າ ໃນວາລະປະຊຸມໃດທີ່ບໍ່ເປັນໄປຕາມທີ່ລະບຸໄວ້ໃນໃບມອບສັນທະສະບັບນີ້ ໃຫ້ຖືວ່າການລົງຄະແນນສຽງນັ້ນບໍ່ຖືກຕ້ອງ ແລະບໍ່ແມ່ນການລົງຄະແນນສຽງຂອງຂ້າພະເຈົ້າ ໃນຖານະຜູ້ຖືຮຸ້ນ.

Voting of the proxy in any agenda that is not as specified in this Proxy shall be considered as invalid and shall not be my/our voting as a shareholder.

(6) ໃນກໍລະນີທີ່ຂ້າພະເຈົ້າ ບໍ່ໄດ້ລະບຸຄວາມຕ້ອງການໃນການລົງຄະແນນສຽງ ໃນວາລະປະຊຸມໃດໄວ້ ຫຼື ລະບຸໄວ້ບໍ່ຈະແຈ້ງໃຫ້ຖືວ່າເຫັນດີ.

In case I/we have not specified my/our voting intention in any agenda or not clearly specified, it shall be deemed approved.

ການກະທຳໃດ ທີ່ຜູ້ຕາງໜ້າໄດ້ກະທຳໄປໃນກອງປະຊຸມ, ເວັ້ນແຕ່ກໍລະນີທີ່ຜູ້ຕາງໜ້າບໍ່ລົງຄະແນນສຽງ ຕາມທີ່ຂ້າພະເຈົ້າລະບຸໃນໃບມອບສັນທະສະບັບນີ້, ໃຫ້ຖືວ່າຂ້າພະເຈົ້າໄດ້ກະທຳເອງທຸກຢ່າງ.

Any business carried out by the proxy at the said meeting, except in case that the proxy does not vote according to my/our intention(s) specified in the Proxy, shall be deemed as having been carried out by myself/ourselves in all respects.

ລົງລາຍເຊັນ/Signed ຜູ້ຖືຮຸ້ນທີ່ມອບໝາຍ/Grantor

(.................................................................)

ລົງລາຍເຊັນ/Signed ຜູ້ຕາງໜ້າ/Proxy

(.................................................................)



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

<u>ໝາຍເຫດ</u>

1. ຜູ້ຖືຮຸ້ນທີ່ມອບໝາຍຈະຕ້ອງມອບໝາຍໃຫ້ຜູ້ຕາງໜ້າພຽງຜູ້ດຽວເປັນຜູ້ເຂົ້າຮ່ວມປະຊຸມແລະລົງຄະແນນສຽງ, ແລະບໍ່ສາມາດແບ່ງແຍກຈໍາ ນວນຮຸ້ນໃຫ້ຜູ້ຕາງໜ້າຫຼາຍຄົນເພື່ອແຍກການລົງຄະແນນສຽງໄດ້.

   The shareholder appointing the proxy must authorize only one proxy to attend and vote at the meeting and may not split the number of shares to several proxies for splitting votes.

2. ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ) ເລກທີ 11/ສພຊ, ລົງວັນທີ 26 ພະຈິກ 2009, ເພື່ອເປັນການຮັບປະກັນຄວາມຜູກພັນຂອງຜູ້ມອບໝາຍແລະຜູ້ຕາງໜ້າທາງດ້ານກົດໝາຍ, ດັ່ງນັ້ນໃບມອບສັນທະສະບັບນີ້ຈະຕ້ອງໄດ້ນໍາໄປຈົດທະບຽນສານ, ໃນນີ້ບໍລິສັດຈະບໍ່ຮັບຜິດຊອບໃດໆໃນກໍລະນີທີ່ໃບມອບສັນທະສະບັບນີ້ທີ່ຍື່ນຕໍ່ບໍລິສັດບໍ່ໄດ້ຈົດທະບຽນສານ.

   Pursuant to the Law on Notary (Amended) No. 11/NA, dated 26 November 2009, in order for the appointment by the shareholder to the proxy to have legal effect, this Proxy must be registered with the court. In this regard, the Company will not take any responsibility in the case where the Proxy submitted to the Company has not been registered with the court.

## ເອກະສານ ແລະ ຫຼັກຖານ ທີ່ຜູ້ເຂົ້າຮ່ວມກອງປະຊຸມຕ້ອງໃຊ້ເພື່ອການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ, ການມອບໝາຍ, ການລົງທະບຽນ ແລະ ການລົງຄະແນນສຽງໃນກອງປະຊຸມຜູ້ຖືຮຸ້ນ

ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ແມ່ນຈັດຂຶ້ນເປັນ 2 ລະບົບ ຄື: ຜູ້ຖືຮຸ້ນສາມາດເຂົ້າຮ່ວມຜ່ານລະບົບອອນລາຍ ຜ່ານລະບົບ EGM: https://agm-egm.edlgen.com.la/user/login ແລະ ສາມາດເຂົ້າຮ່ວມແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 1 ສໍານັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ. ເຊິ່ງຜູ້ຖືຮຸ້ນຕ້ອງປະຕິບັດຕາມແຕ່ລະກໍລະນີດັ່ງລຸ່ມນີ້:

- ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

### I. ສໍາລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມຜ່ານລະບົບອອນລາຍ EGM

ຜູ້ຖືຮຸ້ນ ທີ່ຈະມາເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍໄດ້ ແມ່ນຜູ້ທີ່ໄດ້ຮັບການຕອບຮັບຢືນຢັນການເຂົ້າຮ່ວມຈາກບໍລິສັດເທົ່ານັ້ນ ເຊິ່ງຕ້ອງແຈ້ງຈຸດປະສົງເຂົ້າຮ່ວມປະຊຸມທາງອອນລາຍຜ່ານລະບົບ EGM ທີ່ບໍລິສັດໄດ້ແຈ້ງລາຍລະອຽດຜ່ານອີເມວ, ເລີ່ມລົງທະບຽນປະຊຸມທາງອອນລາຍເລີ່ມແຕ່ວັນທີ່ແຈ້ງອີເມວ ແລະ ບໍ່ເກີນວັນທີ 26 ມັງກອນ 2023.

**1. ເອກະສານທີ່ຕ້ອງກະກຽມໃນການຢັ້ງຢືນເຂົ້າຮ່ວມກອງປະຊຸມ EGM ໃນແຕ່ລະຮູບແບບ ມີດັ່ງນີ້:**

1) ສໍາລັບຜູ້ຖືຮຸ້ນທີ່ມາດ້ວຍຕົນເອງ ທີ່ມີຈຸດປະສົງແຈ້ງເຂົ້າປະຊຸມແບບຊ້ອງໜ້າ, ໃນກໍລະນີນີ້ ຜູ້ຖືຮຸ້ນບໍ່ຈໍາເປັນຕ້ອງນໍາສົ່ງເອກະສານ ອີເລັກໂທຣນິກໃດໆ ເຂົ້າສູ່ລະບົບ EGM.

2) ສໍາລັບຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງຫນ້າ:

2.1. ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກໍາມະການອິດສະຫຼະ ເທົ່ານັ້ນ).

2.2. ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.

- ການເຂົ້າຮ່ວມກອງປະຊຸມຂອງຜູ້ຖືຮຸ້ນທີ່ມອບໃຫ້ຜູ້ຕາງຫນ້າຕາມຂໍ້ 2.1 ແລະ 2.2 ຜູ້ຖືຮຸ້ນຈະຕ້ອງທໍາການສະແກນເອກະສານບັດປະຈໍາຕົວ/ໜັງສືຜ່ານແດນ (ສໍາລັບຄົນຕ່າງປະເທດ) ຂອງຜູ້ຖືຮຸ້ນເອງເພື່ອຢືນຢັນຕົວຕົນ, ເອກະສານໃບມອບສັນທະ, ເອກະສານສໍາຄັນຕ່າງໆ ໂດຍເອກະສານທັງໝົດຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ) ເພື່ອນໍາເຂົ້າສູ່ລະບົບ EGM ເພື່ອໃຫ້ເຈົ້າໜ້າທີ່ທໍາການລົງຄະແນນສຽງໃຫ້ສໍາເລັດ.
- ນອກຈາກນີ້ຜູ້ຖືຮຸ້ນຈະຕ້ອງລົງທະບຽນໃຫ້ຜູ້ຕາງຫນ້າ (ຜູ້ຕາງໜ້າທົ່ວໄປທີ່ບໍ່ແມ່ນກໍາມະການອິດສະຫຼະ) ໂດຍທໍາການອັບໂຫຼດເອກະສານບັດປະຈໍາຕົວ/ໜັງສືຜ່ານແດນ (ສໍາລັບຄົນຕ່າງປະເທດ) ຂອງຜູ້ຕາງຫນ້າ ເພື່ອຢືນຢັນຕົວຕົນ. ໂດຍຕ້ອງເປັນຟາຍ ນາມສະກຸນ JPG, JPEG ເພື່ອນໍາເຂົ້າສູ່ລະບົບ EGM ເພື່ອໃຫ້ເຈົ້າໜ້າທີ່ທໍາການລົງຄະແນນສຽງໃຫ້ສໍາເລັດ.

3) ສໍາລັບຜູ້ຖືຮຸ້ນເຂົ້າຮ່ວມແບບອອນລາຍດ້ວຍຕົນເອງຈະຕ້ອງໄດ້ ອັບໂຫລດເອກະສານບັດປະຈໍາຕົວ /ໜັງສືຜ່ານແດນ (ສໍາລັບຄົນຕ່າງປະເທດ) ເປັນຟາຍນາມສະກຸນ JPG, JPEG ເພື່ອນໍາເຂົ້າສູ່ລະບົບ EGM ເພື່ອຢືນຢັນຕົວຕົນເທົ່ານັ້ນ, ສໍາລັບກໍລະນີນີ້ຜູ້ຖືຮຸ້ນສາມາດລົງຄະແນນສຽງແບບອອນລາຍໄດ້.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**<u>ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມທາງອອນລາຍໄດ້. ເຊິ່ງເອກະສານທີ່ຕ້ອງ ຄັດຕິດສົ່ງເຂົ້າມາໃນລະບົບມີດັ່ງນີ້:</u>**

**1. ການລົງທະບຽນ ເຂົ້າຮ່ວມປະຊຸມວິສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ EGM.**

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ທາງອອນລາຍ ນັບແຕ່ມື້ສົ່ງແຈ້ງເຊີນຜ່ານອີເມວຂອງຜູ້ຖືຮຸ້ນ ເຖິງວັນທີ 26/01/2023 ໂດຍຜູ້ຖືຮຸ້ນທີ່ຈະເຂົ້າຮ່ວມທາງອອນລາຍຕ້ອງແຈ້ງຈຸດປະສົງເຂົ້າຮ່ວມ ຜ່ານລະບົບ EGM ຄື: https://agm-egm.edlgen.com.la/user/login, ລາຍລະອຽດຕ່າງໆແມ່ນແບບຜ່ານອີເມວ ເຊິ່ງຜູ້ຖືຮຸ້ນຈະໄດ້ຮັບຂໍ້ມູນດັ່ງນີ້:

1) ລິ້ງທີ່ຢູ່ເວັບໄຊສໍາລັບການເຂົ້າສູ່ລະບົບ EGM ເພື່ອລົງທະບຽນ ແລະ ລົງຄະແນນສຽງ.
2) ຂໍ້ມູນເລກບັດປະຈໍາຕົວ ຫຼື ເລກໜັງສືຜ່ານແດນ ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສໍາລັບເຂົ້າສູ່ລະບົບ EGM.
   ພາຍຫຼັງ ກົດລິ້ງ https://agm-egm.edlgen.com.la/user/login ເຂົ້າສູ່ລະບົບຄັ້ງທໍາອິດ ຜູ້ຖືຮຸ້ນຈໍາເປັນຕ້ອງໄດ້ກົດ "ລືມລະຫັດຜ່ານ" ເພື່ອດໍາເນີນຕັ້ງຄ່າ ລະຫັດຜ່ານໃຫມ່ ໂດຍທີ່ ລະບົບຈະສົ່ງຂໍ້ຄວາມໄປທີ່ອີເມວຂອງທ່ານທັນທີ.
3) ເມື່ອເຂົ້າສູ່ລະບົບ ການຕອບຮັບເຂົ້າຮ່ວມປະຊຸມ ຈະມີ 3 ທາງເລືອກເຊັ່ນ:
   3.1. "ຕ້ອງການເຂົ້າຮ່ວມປະຊຸມ ມາດ້ວຍຕົນເອງ (Individual)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແຕ່ເຂົ້າຮ່ວມງານປະຊຸມຊ້ອງໜ້າ.
   3.2. "ຕ້ອງການເຂົ້າຮ່ວມກອງປະຊຸມ ໂດຍການມອບສັນທະ (Proxy)" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ມອບສັນທະ, ເຊິ່ງມີລາຍລະອຽດດັ່ງນີ້:
   - ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກໍາມະການອິດສະຫຼະ ເທົ່ານັ້ນ).
   - ໃຫ້ຜູ້ຕາງໜ້າລົງຄະແນນສຽງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ.
   3.3. "ຕ້ອງການເຂົ້າຮ່ວມປະຊຸມ ດ້ວຍຕົນເອງ ແບບອອນລາຍ" ໝາຍເຖິງ ຜູ້ຖືຮຸ້ນແຈ້ງຈຸດປະສົງລົງທະບຽນລ່ວງໜ້າຜ່ານທາງອອນລາຍ ແລະ ເຂົ້າຮ່ວມງານປະຊຸມຜ່ານທາງ Microsoft Team ແລະ ໂຫວດຄະແນນສຽງຜ່ານລະບົບ EGM.

**2. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຈະຕ້ອງສໍາເນົາ ເພື່ອນໍາເຂົ້າລະບົບ EGM ເພື່ອໃຊ້ໃນການຢັ້ງຢືນຕົວຕົນ ໃນການເຂົ້າຮ່ວມກອງປະຊຸມອອນລາຍ**

- ເອກະສານທີ່ໃຊ້ເພື່ອຢັ້ງຢືນຕົວຕົນເຊັ່ນ: ບັດປະຈໍາຕົວ, ບັດໜັງສືຜ່ານແດນ(ສໍາລັບຄົນຕ່າງປະເທດ) ແລະ ເອກະສານອື່ນໆທີ່ກ່ຽວກັບເອກະສານຢັ້ງຢືນຕົວຕົນ ຕ້ອງເປັນຟາຍຮູບພາບ ນາມສະກຸນ JPG ຫຼື JPEG.
- ເອກະສານໃບມອບສັນທະ ແລະ ເອກະສານສໍາຄັນຕ່າງໆ ຕ້ອງເປັນຟາຍນາມສະກຸນ PDF.

2.1 <u>ຜູ້ຖືຮຸ້ນທີ່ເປັນບຸກຄົນ</u>

2.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມອອນລາຍດ້ວຍຕົນເອງ

(1) ໃຫ້ສໍາເນົາເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ, ໃນກໍລະນີດັ່ງກ່າວ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ EGM ຫຼື ອີເມວກໍ່ໄດ້.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໃຫ້ສຳເນົາເອກະສານ ດັ່ງລຸ່ມນີ້ :

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ. ຕົວແທນຕ້ອງສຳເນົາເອກະສານໃນຮູບແບບຟາຍ PDF.

(2) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 2.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍໃນຮູບແບບຟາຍ PDF.

➢ **ເອກະສານ 2 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ສຳເນົາເອກະສານໃນຮູບແບບນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(4) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ EGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2 ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ

2.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອຳນວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ທີ່ເປັນຄົນຕ່າງປະເທດ) ອັບໂຫລດເອກະສານໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ),ໃຫ້ສຳເນົາເອກະສານ ໃນຮູບແບບຟາຍ JPG ຫຼື JPEG (ຮູບພາບ) ເຂົ້າສູ່ລະບົບ EGM ເພື່ອຢືນຢັນຕົວຕົນ.

(3) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ EGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ສະແກນເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່


ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ມອບໝາຍ ແລະ ຜູ້ຕາງໜ້າ ໃຫ້ສຳເນົາເອກະສານເປັນຟາຍດຽວ ເພື່ອສົ່ງເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ EGM.

(2) ສະແກນໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວ ທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF) ເຂົ້າສູ່ລະບົບ EGM ເພື່ອຢືນຢັນຕົວຕົນ.

(3) ສະແກນເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້ 2.2.1 (1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ໃຫ້ສະແກນເອກະສານ ໃນຮູບແບບຟາຍ (PDF).

- **ເອກະສານ 3 ຂໍ້ຂ້າງເທິງນີ້ ຕ້ອງເປັນຟາຍ ນາມສະກຸນ PDF (ລວມເອກະສານໃນຟາຍດຽວ).**

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແມ່ນໃຫ້ອັບໂຫຼດເອກະສານໃນຮູບແບບ ນາມສະກຸນ JPG ຫຼື JPEG ແລະ ກໍລະນີ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ,

(5) ໃນກໍລະນີເອກະສານບໍ່ຖືກຕ້ອງ ຫຼື ບໍ່ຄົບຖ້ວນ ເຈົ້າໜ້າທີ່ລົງທະບຽນຈະແຈ້ງອີເມວເຖິງຕົວແທນ ແລະ/ຫຼື ຜູ້ຖືຮຸ້ນ ໃຫ້ຮັບຊາບ, ເພື່ອຍື່ນຫຼັກຖານເພີ່ມຕື່ມຜ່ານລະບົບ EGM ຫຼື ສົ່ງໂດຍກົງຜ່ານອີເມວກໍ່ໄດ້.

2.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 2.2.1 ຫຼື 2.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

**3. ການມອບໝາຍເອກະສານ.**

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

3.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ ☐ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

- ໃຫ້ສະແກນເອກະສານ ໃບມອບສັນທະ ໃນຮູບແບບຟາຍ (PDF) ເພື່ອສົ່ງເຂົ້າລະບົບ EGM ກ່ອນວັນທີ 26 ມັງກອນ 2023 ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

**4. ການແຈ້ງຕອບ ຈາກລະບົບ EGM ແລະ ຮັບລິ້ງປະຊຸມອອນລາຍຜ່ານ Microsoft Team.**



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

- ກໍລະນີ ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງ ຜົນສະຖານະ ແລະ ແຈ້ງລິ້ງເຂົ້າຮ່ວມປະຊຸມຜ່ານ Microsoft Team ໃນລະບົບບັນຊີຜູ້ໃຊ້ງານ EGM.
- ກໍລະນີ ບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ລົງທະບຽນ, ລະບົບຈະແຈ້ງຜ່ານອີເມວຂອງຜູ້ຖືຮຸ້ນ ແລະ/ຫຼື ອີເມວຂອງຜູ້ຕາງໜ້າ.
- ອີເມວເຈົ້າໜ້າທີ່ລົງທະບຽນຈະສົ່ງຫາຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງດຳເນີນການດ້ານເອກະສານໃຫ້ສຳເລັດ ຕາມໄລຍະເວລາທີ່ກຳນົດ, ອີເມວສຳລັບການແຈ້ງກໍລະນີເອກະສານບໍ່ຜ່ານການອະນຸມັດ ຊຶ່ງທີ່ຢູ່ອີເມວ: agm-egm@edlgen.com.la ສຳລັບຜູ້ຖືຮຸ້ນລົງທະບຽນເຂົ້າຮ່ວມດ້ວຍໂຕເອງແບບອອນລາຍ, ແລະ proxy-register@edlgen.com.la ສຳລັບການລົງທະບຽນແບບແຕ່ງຕັ້ງມອບໝາຍຜູ້ຕາງໜ້າເຂົ້າປະຊຸມແທນ.

**5. ການລົງຄະແນນສຽງໃນກອງປະຊຸມວິສາມັນຜູ້ຖືຮຸ້ນຜ່ານລະບົບອອນລາຍ EGM.**

5.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະ ຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ເມື່ອຜູ້ຖືຮຸ້ນເຂົ້າສູ່ລະບົບເພື່ອລົງຄະແນນສຽງ ພາຍໃນລະບົບ ຈະມີ 2 ທາງເລືອກ ເພື່ອກົດລົງຄະແນນສຽງ ເຫັນດີ ຫຼື ບໍ່ເຫັນດີ, ຜູ້ຖືຮຸ້ນຈະເຫັນ ແລະ ສາມາດກົດເຂົ້າສູ່ວາລະ ເພື່ອລົງຄະແນນສຽງໄດ້ ກໍຕໍ່ເມື່ອ ວາລະນັ້ນເປີດໃຫ້ລົງຄະແນນສຽງຢູ່.

5.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມຜ່ານທາງອອນລາຍ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼື ບໍ່, ກຳນົດເວລາບໍ່ເກີນ 2 ນາທີ ໃນການລົງຄະແນນສຽງ, ຜູ້ທີ່ເຫັນດີຕ້ອງກົດເລືອກ ເຫັນດີ 

, ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກົດເລືອກ ບໍ່ເຫັນດີ 

ໃນໜ້າຕ່າງການລົງຄະແນນ ເພື່ອລະບົບຈະນຳໄປກອດນັບສະຫຼຸບຄະແນນສຽງ,

**<u>ຍົກເວັ້ນ:</u>** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ແລະ ໃຫ້ຜູ້ຕາງໜ້າມີສິດພິຈາລະນາ ແລະ ລົງມະຕິແທນຜູ້ຖືຮຸ້ນໄດ້ທຸກປະການຕາມທີ່ເຫັນສົມຄວນ (ກໍລະນີທີ່ມອບໃຫ້ ກຳມະການອິດສະຫຼະ) ຈະບໍ່ສາມາດລົງຄະແນນສຽງແບບອອນລາຍໄດ້, ເນື່ອງຈາກ ເຈົ້າໜ້າທີ່ຮັບຜິດຊອບລົງຄະແນນສຽງ ໄດ້ທຳການລົງຄະແນນສຽງ ແລະ ບັນທຶກຄະແນນສຽງດັ່ງກ່າວຕາມທີ່ຕົວແທນໄດ້ນຳສົ່ງຟາຍເອກະສານມອບສັນທະ ເຂົ້າສູ່ລະບົບ EGM ກ່ອນໜ້ານີ້ແລ້ວ.

5.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນສຽງ.</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ່ມວາລະປະຊຸມ, ບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດໃນແຕ່ລະວາລະ, ຜູ້ຖືຮຸ້ນສາມາດຮັບຊົມການສະຫຼຸບ ແລະ ແຈ້ງຄະແນນສຽງຜ່ານກອງປະຊຸມອອນລາຍ ຜ່ານໂປຣແກຣມ Microsoft Teams.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**II. ສໍາລັບຜູ້ຖືຮຸ້ນທີ່ເຂົ້າຮ່ວມປະຊຸມແບບຊ້ອງໜ້າ**

ເພື່ອຄວາມສະດວກໃນການລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຂອງ ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ຈະມາເຂົ້າຮ່ວມກອງປະຊຸມ ກະລຸນານໍາໜັງສືເຊີນປະຊຸມ, ໃບແຈ້ງສິດ ແລະ ໃບມອບສັນທະມາພ້ອມ.

**ບໍລິສັດ ຂໍສະຫງວນສິດ ໃນການອະນຸຍາດໃຫ້ສະເພາະຜູ້ທີ່ມີເອກະສານຖືກຕ້ອງ ແລະ ຄົບຖ້ວນເທົ່ານັ້ນ ຈຶ່ງສາມາດເຂົ້າຮ່ວມກອງປະຊຸມໄດ້.**

**1. ເອກະສານ ແລະ ຫຼັກຖານ (ທີ່ຍັງບໍ່ໝົດອາຍຸ) ທີ່ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ຈະຕ້ອງໃຊ້ໃນການສະເໜີໂຕ ໃນການເຂົ້າຮ່ວມກອງປະຊຸມ**

1.1 ຜູ້ຖືຮຸ້ນທີ່ເປັນບຸກຄົນ

1.1.1 ກໍລະນີຜູ້ຖືຮຸ້ນເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ
ໃຫ້ສະແດງເອກະສານທີ່ທາງພາກລັດອອກໃຫ້ ເຊັ່ນ: ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຖືຮຸ້ນທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.1.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສໍາເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຖືຮຸ້ນທີ່ມອບໝາຍ ຕາມຂໍ້ 1.1.1 ຊຶ່ງໄດ້ລົງລາຍເຊັນຮັບຮອງສໍາເນົາຖືກຕ້ອງໂດຍຜູ້ຖືຮຸ້ນທີ່ມອບໝາຍ.

(3) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ສໍາລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2 ຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນ

1.2.1 ກໍລະນີຕົວແທນຂອງຜູ້ຖືຮຸ້ນ (ຜູ້ອໍານວຍການ) ເຂົ້າຮ່ວມກອງປະຊຸມດ້ວຍຕົນເອງ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:

(1) ເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອໍານວຍການ) ເຊັ່ນ: ບັດປະຈໍາຕົວ ຫຼື ໜັງສືຜ່ານແດນ (ສໍາລັບຕົວແທນຂອງນິຕິບຸກຄົນ (ຜູ້ອໍານວຍການ) ທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນ ໃຫ້ຍື່ນຫຼັກຖານປະກອບພ້ອມ.

(2) ສໍາເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນທີ່ເຂົ້າຮ່ວມກອງປະຊຸມ ມີອໍານາດດໍາເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສໍາເນົາຖືກຕ້ອງ ໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອໍານວຍການ).

1.2.2 ກໍລະນີຜູ້ຖືຮຸ້ນມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນ ໃຫ້ແຈ້ງເອກະສານດັ່ງລຸ່ມນີ້:



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

(1) ໃບມອບສັນທະ ຕາມແບບຟອມທີ່ຄັດຕິດມາພ້ອມໜັງສືເຊີນປະຊຸມ ຊຶ່ງໄດ້ມີການປະກອບຂໍ້ຄວາມຖືກຕ້ອງຄົບຖ້ວນ ແລະ ລົງລາຍເຊັນພ້ອມຂຽນຊື່ແຈ້ງໂດຍຜູ້ຖືຮຸ້ນທີ່ມອບໝາຍ ແລະ ຜູ້ຕາງໜ້າ.

(2) ສຳເນົາໃບອະນຸຍາດລົງທຶນຕ່າງປະເທດ (ຖ້າມີ), ໃບທະບຽນວິສາຫະກິດ, ກົດລະບຽບບໍລິສັດ ແລະ ໃບທະບຽນອາກອນ (ປີສຸດທ້າຍ) ຂອງຜູ້ຖືຮຸ້ນທີ່ເປັນນິຕິບຸກຄົນດັ່ງກ່າວທີ່ມີຂໍ້ຄວາມສະແດງໃຫ້ເຫັນວ່າ ຕົວແທນຂອງນິຕິບຸກຄົນມີອຳນາດດຳເນີນການແທນນິຕິບຸກຄົນທີ່ເປັນຜູ້ຖືຮຸ້ນ ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(3) ສຳເນົາເອກະສານທີ່ທາງພາກລັດອອກໃຫ້ຂອງຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ) ຕາມຂໍ້1.2.1(1) ຊຶ່ງໄດ້ລົງລາຍເຊັນຮັບຮອງສຳເນົາຖືກຕ້ອງໂດຍຕົວແທນຂອງນິຕິບຸກຄົນ (ຜູ້ອຳນວຍການ).

(4) ເອກະສານທີ່ທາງພາກລັດອອກໃຫ້ຂອງຜູ້ຕາງໜ້າ ເຊັ່ນ: ບັດປະຈຳຕົວ ຫຼື ໜັງສືຜ່ານແດນ (ສຳລັບຜູ້ຕາງໜ້າທີ່ເປັນຄົນຕ່າງປະເທດ) ແລະ ຫາກມີການປ່ຽນຊື່-ນາມສະກຸນໃຫ້ຍື່ນຫຼັກຖານປະກອບພ້ອມ.

1.2.3 ກໍລະນີຜູ້ຖືຮຸ້ນເປັນນິຕິບຸກຄົນຕ່າງປະເທດ

(1) ໃຫ້ປະຕິບັດຕາມຂໍ້ 1.2.1 ຫຼື 1.2.2 ແລ້ວແຕ່ກໍລະນີ.

(2) ເອກະສານຂອງນິຕິບຸກຄົນຕ່າງປະເທດຕ້ອງໄດ້ແປເປັນພາສາລາວ ຫຼື ພາສາອັງກິດ ແລະ ໃຫ້ຕົວແທນຂອງນິຕິບຸກຄົນດັ່ງກ່າວລົງລາຍເຊັນຮັບຮອງສະບັບແປເປັນພາສາດັ່ງກ່າວ.

## 2. ການມອບໝາຍ

ຜູ້ຖືຮຸ້ນທີ່ບໍ່ສາມາດເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດໄດ້ດ້ວຍຕົນເອງ ສາມາດມອບໝາຍໃຫ້ຜູ້ຕາງໜ້າເຂົ້າຮ່ວມກອງປະຊຸມແທນໄດ້ ໂດຍດຳເນີນການດັ່ງນີ້:

2.1 ມອບໝາຍໃຫ້ຜູ້ໃດໜຶ່ງຕາມຄວາມຕ້ອງການຂອງຜູ້ຖືຮຸ້ນ ຫຼື ເລືອກມອບສິດໃຫ້ກຳມະການອິດສະຫຼະຂອງບໍລິສັດຜູ້ໃດໜຶ່ງ ໂດຍໃຫ້ລະບຸຊື່ພ້ອມລາຍລະອຽດຂອງບຸກຄົນທີ່ຜູ້ຖືຮຸ້ນຕ້ອງການຈະມອບໝາຍ ຫຼື ກາເຄື່ອງໝາຍ (✓) ລົງໃນຊ່ອງ ☐ ໜ້າຊື່ກຳມະການອິດສະຫຼະ ຕາມທີ່ລະບຸໄວ້ໃນໃບມອບສັນທະ ໂດຍເລືອກພຽງຜູ້ດຽວໃຫ້ເປັນຜູ້ຮັບມອບໝາຍໃນການເຂົ້າຮ່ວມກອງປະຊຸມດັ່ງກ່າວ.

2.2 ນຳສົ່ງໃບມອບສັນທະຄືນ ພະແນກເລຂານຸການບໍລິສັດ ກ່ອນວັນທີ **30 ມັງກອນ 2023** ຫຼື ກ່ອນເວລາເປີດກອງປະຊຸມຢ່າງໜ້ອຍໜຶ່ງຊົ່ວໂມງ ເພື່ອໃຫ້ເຈົ້າໜ້າທີ່ຂອງບໍລິສັດໄດ້ມີເວລາກວດກາເອກະສານ ເພື່ອໃຫ້ທັນເວລາເປີດກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນບໍ່ສາມາດແບ່ງແຍກຈຳນວນຮຸ້ນໂດຍມອບໝາຍໃຫ້ຜູ້ຕາງໜ້າຫຼາຍຄົນ ເພື່ອແບ່ງການລົງຄະແນນສຽງໄດ້ ແລະ ຜູ້ຖືຮຸ້ນຈະຕ້ອງມອບໝາຍເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ ໂດຍບໍ່ສາມາດມອບໝາຍພຽງບາງສ່ວນໜ້ອຍກວ່າຈຳນວນທີ່ຕົນຖືຢູ່ໄດ້.

## 3. ການລົງທະບຽນ

ບໍລິສັດຈະເລີ່ມເປີດຮັບລົງທະບຽນຜູ້ເຂົ້າຮ່ວມກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023 ຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ ກ່ອນເປີດກອງປະຊຸມ 01 ຊົ່ວໂມງ 30 ນາທີ ຫຼື ຕັ້ງແຕ່ເວລາ 13:30-15:00 ໂມງເປັນຕົ້ນໄປ ໃນວັນທີ **30 ມັງກອນ 2023** ທີ່ຫ້ອງປະຊຸມຊັ້ນ 1 ອາຄານສຳນັກງານລັດວິສາຫະກິດໄຟຟ້າລາວ ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫລວງວຽງຈັນ ຕາມແຜນທີ່ຄັດຕິດມາພ້ອມນີ້.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມວ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

ໃນນີ້, ໃນແຕ່ລະວາລະປະຊຸມ ກ່ອນເລີ້ມການລົງຄະແນນ ບໍລິສັດຈະປິດຮັບລົງທະບຽນເປັນການຊົ່ວຄາວ ແລະຈະເປີດຮັບລົງທະບຽນອີກເມື່ອການນັບຄະແນນຂອງແຕ່ລະວາລະປະຊຸມສຳເລັດ.

**4. ການລົງຄະແນນສຽງໃນກອງປະຊຸມວິສາມັນຜູ້ຖືຮຸ້ນ**

4.1 <u>ຫຼັກການລົງຄະແນນສຽງ</u>

(1) ໜຶ່ງຮຸ້ນເທົ່າກັບ ໜຶ່ງສຽງ ແລະຜູ້ຖືຮຸ້ນຈະຕ້ອງລົງຄະແນນສຽງເທົ່າກັບຈຳນວນຮຸ້ນທີ່ຕົນຖືຢູ່ເທົ່ານັ້ນ.

(2) ບໍລິສັດຈະຈັດໃຫ້ມີບັດລົງຄະແນນ (Ballots) ສໍາຫຼັບທຸກໆ ວາລະປະຊຸມ ທີ່ຕ້ອງມີການລົງຄະແນນສຽງ ໂດຍບໍລິສັດຈະແຈກບັດລົງຄະແນນໃຫ້ຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທຸກຄົນ ໃນເວລາທີ່ລົງທະບຽນ, **<u>ຍົກເວັ້ນ</u>** ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິສັດຈະບໍ່ແຈກບັດລົງຄະແນນໃຫ້ແກ່ຜູ້ຕາງໜ້າດັ່ງກ່າວ, ໃນນີ້ ຜູ້ທີ່ມາລົງທະບຽນຫຼັງຈາກເວລາທີ່ກອງປະຊຸມຜູ້ຖືຮຸ້ນໄດ້ເປີດກອງປະຊຸມ ໄປຕາມລະບຽບວາລະປະຊຸມບາງສ່ວນແລ້ວ, ຈະໄດ້ຮັບບັດລົງຄະແນນສະເພາະວາລະປະຊຸມທີ່ເຫຼືອຢູ່ເທົ່ານັ້ນ.

4.2 <u>ວິທີປະຕິບັດໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ</u>

ໃນການລົງຄະແນນສຽງໃນແຕ່ລະວາລະປະຊຸມ ເພື່ອບໍ່ໃຫ້ເປັນການເສຍເວລາຂອງຜູ້ຖືຮຸ້ນ ແລະ ຜູ້ຕາງໜ້າທັງໝົດ, ປະທານໃນກອງປະຊຸມຈະຖາມວ່າ ມີຜູ້ໃດບໍ່ເຫັນດີ ຫຼືບໍ່ ຜູ້ທີ່ເຫັນດີບໍ່ຕ້ອງກາເຄື່ອງໝາຍໃດໆ ລົງໃນບັດລົງຄະແນນ (Ballots) ສ່ວນຜູ້ທີ່ບໍ່ເຫັນດີກັບວາລະປະຊຸມດັ່ງກ່າວ ໃຫ້ກາເຄື່ອງໝາຍ (✓) ລົງໃນຊ່ອງ ☐ ບໍ່ເຫັນດີ ໃນບັດລົງຄະແນນ ພ້ອມລົງລາຍເຊັນໃນບັດລົງຄະແນນ ແລະ ຍົກມືຂຶ້ນ ເພື່ອສົ່ງມອບໃຫ້ແກ່ເຈົ້າໜ້າທີ່ຂອງບໍລິສັດ ເພື່ອນຳໄປກວດນັບ, <u>ຍົກເວັ້ນ</u> ສຳລັບຜູ້ຕາງໜ້າ ຊຶ່ງຜູ້ຖືຮຸ້ນທີ່ມອບໝາຍໄດ້ລະບຸການລົງຄະແນນສຽງມາໃນໃບມອບສັນທະຢ່າງຈະແຈ້ງແລ້ວ ບໍລິ ສັດຈະບັນທຶກຄະແນນສຽງດັ່ງກ່າວຕັ້ງແຕ່ເວລາທີ່ຜູ້ຕາງໜ້າລົງທະບຽນເຂົ້າຮ່ວມກອງປະຊຸມ.

ໃນນີ້, ຜູ້ຖືຮຸ້ນ ຫຼື ຜູ້ຕາງໜ້າ ທີ່ສົ່ງບັດລົງຄະແນນບໍ່ເຫັນດີ ພາຍຫຼັງຈາກທີ່ປະທານໄດ້ປະກາດໃຫ້ກອງປະຊຸມຊາບຜົນການລົງຄະແນນສຽງ ໃນແຕ່ລະວາລະປະຊຸມສິ້ນສຸດລົງແລ້ວ, ບໍລິສັດຈະບໍ່ນຳເອົາຄະແນນສຽງດັ່ງກ່າວມາລວມ ເປັນຄະແນນສຽງອີກ.

4.3 <u>ການນັບຄະແນນສຽງ ແລະ ການແຈ້ງຜົນການນັບຄະແນນ</u>

ຜູ້ອຳນວຍການໃຫຍ່ຂອງບໍລິສັດ ຈະເປັນຜູ້ອະທິບາຍວິທີການນັບຄະແນນສຽງ ໃຫ້ກອງປະຊຸມຮັບຊາບ ກ່ອນເລີ້ມວາລະປະຊຸມ ໂດຍບໍລິສັດຈະນັບຄະແນນສຽງ ແລະ ແຈ້ງຜົນການນັບຄະແນນໃຫ້ກອງປະຊຸມຮັບຊາບກ່ອນສິ້ນສຸດການປະຊຸມໃນແຕ່ລະວາລະ.

ໃນນີ້, ບໍລິສັດ ຈະໃຊ້ວິທີຫັກຄະແນນສຽງທີ່ບໍ່ເຫັນດີອອກຈາກຈຳນວນສຽງທັງໝົດ ແລະ ສ່ວນທີ່ເຫຼືອຈະຖືເປັນຄະແນນສຽງທີ່ເຫັນດີ.



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

## ຂັ້ນຕອນເຂົ້າລະບົບກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຜ່ານລະບົບອອນລາຍ

ຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າປະຊຸມຜ່ານລະບົບອອນລາຍ ສາມາດປະຕິບັດຕາມຂັ້ນຕອນດັ່ງນີ້:

1. ບໍລິສັດ ຈະສົ່ງ E-Mail ແຈ້ງເຊີນປະຊຸມ ແລະ ລາຍລະອຽດການເຂົ້າຮ່ວມປະຊຸມ ໄປຫາຜູ້ຖືຮຸ້ນປະກອບມີ:
   1) ລິ້ງສໍາລັບເຂົ້າສູ່ລະບົບ EGM ເພື່ອລົງທະບຽນກອງປະຊຸມຜູ້ຖືຮຸ້ນ ແລະ ລົງຄະແນນສຽງຜ່ານອອນລາຍ.
   2) ຂໍ້ມູນເລກບັດປະຈໍາຕົວ ຫຼື ເລກໜັງສືຜ່ານແດນ (ສໍາລັບຄົນຕ່າງປະເທດ) ທີ່ໃຊ້ເປັນ ຊື່ຜູ້ໃຊ້ງານ ສໍາລັບ ເຂົ້າສູ່ລະບົບ EGM.
   3) File ບັດເຊີນທີ່ຄັດຕິດເພື່ອເປັນຂໍ້ມູນ.
      - ຊື່ອີເມວ ຂອງບໍລິສັດ ຜ-ຟຟລ ທີ່ແຈ້ງເຊີນເຖິງຜູ້ຖືຮຸ້ນ ແມ່ນ: agm-egm@edlgen.com.la.

2. ສໍາລັບຜູ້ຖືຮຸ້ນທີ່ມີຈຸດປະສົງເຂົ້າຮ່ວມກອງປະຊຸມຜ່ານລະບົບອອນລາຍ ລະບົບລົງທະບຽນອອນລາຍ ຈະເປີດໃຫ້ດໍາເນີນການ **ຕັ້ງແຕ່ວັນທີຜູ້ຖືຮຸ້ນໄດ້ຮັບບັດເຊີນ ໂດຍລະບົບຈະປິດຮັບ ການລົງທະບຽນອອນລາຍ ໃນວັນທີ 26/01/2023 ເວລາ 17:00 ໂມງ.**
3. ທ່ານສາມາດ ສະແກນ QR Code ແລະ ນໍາໃຊ້ Short link ເພື່ອດາວໂຫລດຄູ່ມືການຕິດຕັ້ງ ໂປຣແກມ Microsoft Teams ແລະ ຂັ້ນຕອນການໃຊ້ງານລະບົບ ກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຜ່ານລະບົບອອນລາຍ EGM ເພື່ອສຶກສາກ່ຽວກັບລະບົບ ແລະ ປະຕິບັດຕາມແຕ່ລະຂັ້ນຕອນ.

Scan

Short link: https://bit.ly/3GqzpGD



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**ໝາຍເຫດ:**

1. ຜູ້ຖືຮຸ້ນຕ້ອງນໍາເອົາ ຂໍ້ມູນເລກບັດປະຈໍາຕົວ ຫຼື ເລກໜັງສືຜ່ານແດນ (ສໍາລັບຄົນຕ່າງປະເທດ) ທີ່ໄດ້ຮັບຈາກ E-Mail ເພື່ອໃຊ້ເປັນ ຊື່ຜູ້ໃຊ້ງານ ເຂົ້າສູ່ລະບົບ EGM, ເພື່ອແຈ້ງຈຸດປະສົງການເຂົ້າຮ່ວມຜ່ານອອນລາຍ, ເມື່ອເອກະສານຢັ້ງຢືນຕົວຕົນ ແລະ ເອກະສານສໍາຄັນຕ່າງໆຂອງຜູ້ຖືຮຸ້ນ ຜ່ານການອະນຸມັດໃນຂັ້ນຕອນນີ້ຈະນັບເປັນອົງປະຊຸມໃຫ້ (ຖ້າຫາກຜູ້ຖືຮຸ້ນບໍ່ດໍາເນີນການລົງທະບຽນ/ຢືນຢັນຕົວຕົນໃຫ້ສໍາເລັດ, ກໍລະນີທີ່ເອກະສານບໍ່ຜ່ານການອະນຸມັດ ຈາກເຈົ້າໜ້າທີ່ ການເຂົ້າຮ່ວມກອງປະຊຸມ ລະບົບຈະບໍ່ນັບເປັນອົງປະຊຸມ ແລະ ບໍ່ສາມາດໂຫວດຄະແນນຜ່ານອອນລາຍໄດ້ ລວມເຖິງຈະບໍ່ສາມາດຮັບຊົມການຖ່າຍທອດສົດຂອງກອງປະຊຸມໄດ້), ກໍລະນີເຂົ້າຮ່ວມໂຫວດອອນລາຍ ຖ້າຫາກຜູ້ຖືຮຸ້ນກົດປຸ່ມ “ອອກຈາກການປະຊຸມ ຫຼື ອອກຈາກລະບົບໂຫວດຄະແນນສຽງ” ລະຫວ່າງການດໍາເນີນກອງປະຊຸມ ລະບົບຈະຕັດຄະແນນສຽງ ອອກຈາກອົງປະຊຸມ.
2. ຜູ້ຖືຮຸ້ນຕ້ອງມີ E-Mail ເພື່ອຮັບຂໍ້ມູນແຈ້ງເຊີນເຂົ້າຮ່ວມລົງທະບຽນກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈໍາປີ 2023 ຜ່ານລະບົບອອນລາຍ.
3. ຂໍ້ມູນທີ່ປະກອບໃນລະບົບຕ້ອງກົງກັບຂໍ້ມູນ ໃນວັນ Record Date ຈາກຕະຫຼາດຫຼັກຊັບລາວ.
4. ກໍລະນີພົບບັນຫາໃນການໃຊ້ງານລະບົບປະຊຸມຜູ້ຖືຮຸ້ນຜ່ານລະບົບອອນລາຍ ຂອງ ຜ-ຟຟລ ສາມາດຕິດຕໍ່ໄດ້ທີ່ເບີ ໂທ: 020 2221 0404, 020 5884 8144 (ໃຫ້ບໍລິການຈົນເຖິງ ວັນທີ 30 ມັງກອນ 2023 ເວລາ 8:30 - 17:00 ໂມງ).



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

**ແຜນທີ່ ຂອງສະຖານທີ່ຈັດກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2023**

**Map of the Meeting Venue**




ກອງປະຊຸມວິສາມັນຜູ້ຖືຮຸ້ນຄັ້ງທີ 1/2023
ທີ່ຫ້ອງປະຊຸມຊັ້ນ 1, ອາຄານສຳນັກງານໃຫຍ່ ລັດວິສາຫະກິດໄຟຟ້າລາວ.

**The Extraordinary General Meeting of Shareholders No. 1/2023, on 1st floor, Electricite du Laos Headquarters Building.**



ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ປ.ນ. 2392,
ໂທລະສັບ:(856-21) 316142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la